XANG et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 351 - 359

# ທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຮຽນຜ່ານລະບົບອອນລາຍ ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2019-2020

**ຢ່າງ ຊ້າງ [1], ໄຊພອນ ຄົດໄຊໂຍ , ເພັດສະໝອນ ສຸລິວົງ, ສຸລິນທອນ ສິດາພອນ, ພັນທະມະນັດ ປະທຸມວັນ, ບຸນທຽມ ພາລີໃບ**

*ພະແນກວິຊາການ, ຄະນະສຶກສາສາດ*

*[1] ຜູ້ຕິດຕໍ່ພົວພັນ:*
*ຢ່າງ ຊ້າງ, ພະແນກວິຊາການ ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ*
*ເບີໂທ: +856 20 55391171,*
*ອີເມວ: yangxang@su.edu.la*

*ຂໍ້ມູນບົດຄວາມ:*
*ການສົ່ງບົດຄວາມ: 10 ກັນຍາ 2021*
*ປັບປຸງສຳເລັດ: 12 ຕຸລາ 2021*
*ການຕອບຮັບ: 29 ພະຈິກ 2021*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ ເປັນສຶກສາທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຮຽນຜ່ານລະບົບອອນລາຍ ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2019-2020 ໂດຍມີຈຸດປະສົງເພື່ອສຶກສາຄວາມຄິດເຫັນຂອງນັກສຶກສາ ທີ່ມີຕໍ່ການຮຽນຜ່ານລະບົບອອນລາຍ ຕາມປັດໄຈທາງດ້ານພູມລຳເນົາຂອງກຸ່ມນັກສຶກສາທີ່ມາຈາກຕົວເມືອງ ແລະ ກຸ່ມນັກສຶກສາທີ່ມາຈາກຊົນນະບົດ ກຸ່ມຕົວຢ່າງໃນການຄົ້ນຄ້ວາ ຄັ້ງນີ້ແມ່ນນັກສຶກສາຄະນະສຶກສາສາດ ຈຳນວນ 165 ຄົນ, ຍິງ 73 ຄົນ ໂດຍສຸ່ມຈາກນັກສຶກສາທັງໝົດ ໃນສົກຮຽນ 2019-2020 ຈຳນວນ 283 ຄົນ, ເຄື່ອງມືທີ່ໃຊ້ໃນການສຶກສາປະກອບມີ ແບບປະເມີນທັດສະນະຄະຕິ ທີ່ເປັນຊຸດຄຳຖາມແບບ Rating Scale ຈຳນວນ 25 ຂໍ້ ເຊິ່ງມີ IOC = 1.00; ແລະ ຄ່າຄວາມເຊື່ອໝັ້ນທັງສະບັບ .964 ດຳເນີນການສຶກສາໂດຍການນຳຂໍ້ມູນຈາກແບບສອບຖາມມາວິເຄາະຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ ພ້ອມທັງປຽບທຽບຄ່າສະເລ່ຍຂອງຄຳຄິດເຫັນຈາກນັກສຶກສາແຕ່ລະກຸ່ມ

ຜົນການຄົ້ນຄວ້າພົບວ່າ:

1. ທັດສະນະຄະຕິຂອງນັກສຶກ ຕໍ່ກັບການຮຽນຜ່ານລະບົບອອນລາຍທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ແມ່ນຢູ່ໃນລະດັບປານກາງ ໂດຍມີຄ່າສະເລ່ຍ $\bar{X}$ = 3.35; S.D = 1.05

2. ນັກສຶກສາທີ່ມາຈາກຕ່າງພູມລຳເນົາ ມີທັດສະນະຄະຕິຕໍ່ກັບການຮຽນຜ່ານລະບົບອອນລາຍແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .05

**ຄຳສັບສຳຄັນ:** *ທັດສະນະຄະຕິ, ນັກສຶກສາຕົວເມືອງ, ນັກສຶກສາຊົນນະບົດ, ຄຳຄິດເຫັນ*

# STUDENTS' ATTITUDES TOWARD ONLINE-INSTRUCTION AT FACULTY OF EDUCATION SOUPHANOUVONG UNIVERSITY, ACADEMIC YEAR 2019-2020

**Yang XANG [1], Saiphone KHOTSAIGNOH , Phetsamone SOULIVONG, Soulinthone Sidaphone, Phanthamanath phatuomvanh, Bounthiem PHALIBAY**

*Academic Department, Faculty of education*

***[1]Correspondence:***

*Yang XANG, Department of Academic Affair*
*Faculty of Education, Souphanouvong University*
*Tel: +856 20 55391171,*
*E-mail: yangxang@su.edu.la*

***Article Info:***
*Submitted: Sep 10, 2021*
*Revised: Oct 12, 2021*
*Accepted: Nov 29, 2021*

**Abstract**

This research intended to investigate on Students' Attitudes toward Online-instruction at Faculty of Education Souphanouvong University during the pandemic of COVID-19, The research aimed to investigate the student`s opinion about the Online instruction and compare mean with a variables of Urban-resident students and Rural-resident students. 165 students were selected as samples from the total of 283 students who are currently studying in the Faculty of Education, the instrument used was a questionnaire with five rating scales. Prior to using the questionnaire, it was tested by the IOC = 1 and reliability of .964 the data was analyzed by comparing the Mean and Standard Deviation of the two student groups.

The research findings found that:

1. The students' attitude toward online-instruction at the Faculty of Education was of a medium level by the mean of $\bar{X}$= 3.35 and $S.D$ = 1.05

2. The students from different residence have different opinions toward online-instruction with the statistical significant of .05

**Keywords:** *Attitude, Urban-resident students, Rural-resident students, Opinion*

## 1. ພາກສະເໜີ

ໃນສັງຄົມໂລກຍຸກປັດຈຸບັນ ຄວາມກ້າວໜ້າທາງດ້ານເທັກໂນໂລຢີການສື່ສານ ໄດ້ເຂົ້າມາມີບົດບາດໃນການດຳເນີນຊີວິດ ແລະ ການເຮັດວຽກ ໂດຍຊ່ວຍໃຫ້ເກີດຄວາມວ່ອງໄວ ແລະ ສາມາດສື່ງຕໍ່ຂໍ້ມູນຂ່າວສານກັນໄດ້ຜ່ານເຖິງກັນທົ່ວໂລກ ເກີດສັງຄົມທີ່ເອີ້ນວ່າ "ສັງຄົມຂໍ້ມູນຂ່າວສານ" (Information Society) ເຊິ່ງເປັນສັງຄົມທີ່ມີການໃຊ້ຂໍ້ມູນຂ່າວສານໃນດ້ານຕ່າງ, ການມີນະວັດຕະກຳໜ່ໆທາງດ້ານເທັກໂນໂລຢີ ໄດ້ເຮັດໃຫ້ການເຂົ້າເຖິງຂໍ້ມູນຂ່າວສານສາມາດເຮັດໄດ້ງ່າຍ ແລະ ສະດວກວ່ອງໄວຫຼາຍຂຶ້ນ

ເທັກໂນໂລຢີໃນຍຸກປັດຈຸບັນ ມີການພັດທະນາຢ່າງກ້າວກະໂດດ ແລະ ໄດ້ເຮັດໃຫ້ຄົນປະມານເຄິ່ງໂລກຖືກເຊື່ອມໂຍງເຂົ້າຫາກັນ ບົນເຄືອຂ່າຍທີ່ເອີ້ນວ່າ "ອິນເຕີເນັດ" (internetworldstats, 2020) ເຊິ່ງເວົ້າໄດ້ວ່າປັດຈຸບັນໄດ້ເຂົ້າໄປມີບົດບາດຢູ່ໃນທຸກຂົງເຂດວຽກງານ ໂດຍສະເພາະ

ໃນວົງການສຶກສາ ທີ່ໄດ້ນຳເອົາຄວາມກ້າວໜ້າຂອງເທັກໂນໂລຢີຄອມພິວເຕີ ມາບູລະນາການເຂົ້າກັບເທັກນິກການຈັດການຮຽນ-ການສອນ ອັນກໍ່ໃຫ້ເກີດມີນະວັດຕະກຳໃໝ່ໆຂຶ້ນມາໃນວົງການວິຊາການສຶກສາຢ່າງ ແລະ ໜຶ່ງໃນນັ້ນທີ່ພົ້ນເດັ່ນກໍ່ຄື ການສຶກສາທາງໄກ

ການສຶກສາທາງໄກ (Distance Education) ເປັນນະວັດຕະກຳທາງການສຶກສາທີ່ເກີດຂຶ້ນເພື່ອຕອບສະໜອງຄວາມຕ້ອງການຂອງລະບົບການສຶກສາໃນປັດຈຸບັນ ເຊິ່ງເປັນຍຸກຂອງຂໍ້ມູນຂ່າວສານ ລວມເຖິງເປັນສັງຄົມແຫ່ງການຮຽນຮູ້, ນອກຈາກນີ້ ຍັງເປັນການລຸດຊ່ອງວ່າງ ແລະ ເປັນການເປີດໂອກາດທາງການສຶກສາ ໃຫ້ກັບທຸກໆຄົນຢ່າງສະເໝີພາບກັນ ແລະ ມັນຍັງເປັນການເຮັດໃຫ້ໂລກຂອງພວກເຮົາຮູ້ສຶກແຄບເຂົ້າ ເມື່ອຄູຜູ້ສອນ ແລະ ນັກຮຽນສາມາດດຳເນີນກິດຈະກຳຮຽນຮູ້ຮ່ວມກັນ ທັ້ງໆທີ່ຢູ່ຄົນລະສະຖານທີ່ ແລະ ເວລາ (Ronghuai Huang and J. Michael Spector, 2019), ໂດຍສະຖາບັນການສຶກສາໄດ້ຈັດທຳໃຫ້ກັບຜູ້ຮຽນ ມີການຈັດສິ່ງສື່ການສອນ ແລະ ມີການວາງແຜນດຳເນີນງານ ປະກອບດ້ວຍເອກະສານສີ່ສິ່ງພິມ, ສື່ວີດີໂອ, ສື່ຄອມພິວເຕີ ເຊິ່ງຜູ້ຮຽນອາດເລືອກໃຊ້ສື່ສະເພາະຕົນ ຫຼື ສະເພາະກຸ່ມໄດ້, ມີການວາງແຜນດຳເນີນການ ມີລະບົບການຈັດສິ່ງສື່ການສອນດ້ວຍເທັກໂນໂລຢີຕ່າງໆ, ເຊິ່ງປັດຈຸບັນມີການໃຊ້ສື່ເສີມປະເພດຕ່າງໆທີ່ໃຊ້ງານຜ່ານລະບົບຄອມພິວເຕີ ເປັນຕົ້ນແມ່ນ ການສຶກສາແບບອອນລາຍ (E-Learning) ໝາຍເຖິງ ການສຶກສາການຮຽນຮູ້ຜ່ານເຄືອຂ່າຍຄອມພິວເຕີ ອິນເຕີເນັດ (Internet) ຫຼື ອິນທຣາເນັດ (Intranet) ເປັນການຮຽນຮູ້ຕາມຄວາມສາມາດ ແລະ ຄວາມສົນໃຈຂອງຕົນເອງ

ການຮຽນ-ການສອນແບບອອນລາຍ ເປັນການຮຽນຜ່ານທາງລະບົບອິນເຕີເນັດ ໂດຍຢູ່ໃນຮູບແບບຂອງຄອມພິວເຕີ, ເປັນການໃຊ້ເທັກໂນໂລຢີສະໄໝໃໝ່ ບູລະນາການເຂົ້າກັບເຄື່ອຂ່າຍອິນເຕີເນັດ ສ້າງການສຶກສາທີ່ມີປະຕິສຳພັນຄຸນະພາບສູງ ໂດຍບໍ່ຈຳເປັນຕ້ອງເດີນທາງ ເກີດຄວາມສະດວກ ແລະ ເຂົ້າເຖິງໄດ້ຢ່າງວ່ອງໄວ ທຸກສະຖານທີ່ ທຸກເວລາ ແລະ ທັງເປັນການສ້າງການສຶກສາຕະຫຼອດຊີບໃຫ້ກັບປະຊາຊົນ (ຈັກກະພົດ ໂພດາພົນ, 2020)

ສຳລັບປະເທດລາວເຮົາ ໂດຍເຫັນໄດ້ບົດບາດ ແລະ ຄວາມສຳຄັນຂອງເທັກໂນໂລຢີ ທີ່ມີຕໍ່ການດຳລົງຊີວິດ ແລະ ການເຄື່ອນໄຫວວຽກງານຂອງມະນຸດເຮົານັ້ນ ທາງພັກ-ລັດຖະບານກໍ່ໄດ້ສົ່ງເສີມການພັດທະນາ ແລະ ກໍ່ສ້າງພື້ນຖານວັດຖຸເຕັກນິກ ໂດຍການນຳຮັບເອົາສິ່ງປະດິດອັນຍອດຍິ່ງຈາກນາໆປະເທດ ເຂົ້າມາພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ເວົ້າລວມເວົ້າສະເພາະວຽກງານສຶກສາຂອງພວກເຮົາ ທາງກະຊວງສຶກສາທິການ ແລະ ກິລາກໍ່ໄດ້ມີການວາງຍຸດທະສາດການພັດທະນານັກວິຊາການ ແລະ ປັນຍາຊົນໃຫ້ມີຄວາມຮູ້ ແລະ ຄວາມສາມາດໃນການນຳໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານທີ່ທັນສະໄໝ ໂດຍສະເພາະການປະຍຸກນະວັດຕະກຳຕ່າງໆ ເພື່ອພັດທະນາຄຸນະພາບການສຶກສາຂອງປະເທດເຮົາໃຫ້ສູງຂຶ້ນ. (Ministry of Education and Sport, 2016)

ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ກໍ່ແມ່ນໜຶ່ງໃນຈຳນວນ 12 ສະຖາບັນສ້າງຄູຂອງປະເທດລາວເຮົາໃນປັດຈຸບັນ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນເປັນຄະນະທຳອິດຂອງມະຫາວິທະຍາໄລສຸພານຸວົງ ໃນປີ 2003 ໂດຍມີພາລະບົດບາດໃນການເປັນບ່ອນສ້າງ ແລະ ພັດທະນາບຸກຄະລາກອນຄູ ເພື່ອຕອບສະໜອງໃຫ້ແກ່ວຽກງານການພັດທະນາເສດຖະກິດ-ສັງຄົມ ຕາມວິໄສທັດຮອດປີ 2030 ຕ້ອງສ້າງໃຫ້ເປັນສູນກາງແຫ່ງຄວາມເປັນເລີດ ໃນດ້ານການຜະລິດ ແລະ ພັດທະນາວິຊາຊີບຄູ ເພື່ອພັດທະນາທ້ອງຖິ່ນຢ່າງຍືນຍົງ ຢູ່ ເຂດພາກເໜືອຂອງສປປ ລາວ ຕາມຄຳຂັວນ "ສ້າງຄົນໃຫ້ມີຄວາມຮູ້, ສ້າງຄູໃຫ້ມີຄຸນນະພາບ, ມີວິໄນໃສ່ໃຈພັດທະນາທ້ອງຖິ່ນ" ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ ຄະນະສຶກສາສາດກໍ່ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ ຈົນຮອດປັດຈຸບັນຄະນະສຶກສາສາດ ໄດ້ດຳເນີນການຮຽນ - ການສອນ ປະກອບດ້ວຍ 3 ພາກວິຊາ ຄື: ພາກວິຊາຄູພາສາສາດ, ພາກວິຊາຄູວິທະຍາສາດທຳມະຊາດ ແລະ ພາກວິຊາຄູວິທະຍາສາດ

ສັງຄົມ. (ຄະນະສຶກສາສາດ, 2019) ໂດຍເຫັນໄດ້ຄວາມສໍາຄັນໃນການພັດທະນາຄຸນະພາບການຮຽນ-ການສອນ ຂອງຄູ-ອາຈານ ພາຍໃນຄະນະ ໄດ້ມີການນໍາເອົາເທັກໂນໂລຢີ ແລະ ອຸປະກອນຄອມພິວເຕີຕ່າງໆເຂົ້າມາຮັບໃຊ້ເຂົ້າໃນການຮຽນ-ການສອນ ຂອງຄູ-ອາຈານ ແລະ ນັກສຶກສາ, ນອກຈາກນີ້ ກໍ່ຍັງໄດ້ຈັດໃຫ້ມີການເຝິກອົບຮົມຢ່າງເປັນປະຈໍາເພື່ອຍົກສູງຄວາມສາມາດດ້ານ ICT ໃຫ້ແກ່ຄູ-ອາຈານ ທັງຍັງໄດ້ສົ່ງພະນັກງານພາຍໃນຄະນະໄປເຝິກອົບຮົມຢູ່ພາຍໃນ ແລະ ຕ່າງປະເທດນໍາອີກ.

ໃນໄລຍະທີ່ຜ່ານມາ ຄູ-ອາຈານ ຢູ່ພາຍໃນຄະນະສຶກສາສາດຂອງພວກເຮົາ ກໍ່ໄດ້ມີການພັດທະນາຮູບແບບການຮຽນ-ການສອນ ໂດຍການນໍາເອົາເທັກໂນໂນໂລຢີການສື່ສານເຂົ້າມາຊ່ວຍ ໃນການຈັດກຸ່ມການຮຽນລາຍວິຊາຂອງຕົນເອງ, ເປັນພື້ນທີ່ແລກປ່ຽນຄໍາຄິດເຫັນ ແລະ ສົນທະນາກັນລະຫວ່າງຄູ ແລະ ນັກສຶກສາ ຢ່າງເປັນປະຈໍາ ອັນໄດ້ສ້າງຄວາມສະດວກສະບາຍໃຫ້ແກ່ການຈັດການຮຽນ-ການສອນຢ່າງເປັນຮູບປະທໍາ, ຄູ-ອາຈານພາຍໃນຄະນະ ບາງທ່ານກໍ່ຍັງໄດ້ມີການນໍາເອົາສື່ປະສົມ (Multimedia) ເຂົ້າມາຊ່ວຍໃນການສອນເຊິ່ງເຫັນວ່າມີປະສິດທິຜົນດີພໍສົມຄວນ ແລະ ຖືເປັນນະວັດຕະກໍາອັນໃໝ່ສໍາລັບວຽກງານວິຊາການພາຍໃນຄະນະ. (ຄະນະສຶກສາສາດ, 2020)

ຄຽງຄູ່ກັບພັດທະນາການທີ່ກ່າວມາຂ້າງເທິງນັ້ນ ກໍ່ຍັງມີຂໍ້ຫຍຸ້ງຍາກ ແລະ ຈໍາກັດຫຼາຍຢ່າງໃນການນໍາໃຊ້ເທັກໂນໂລຢີເຂົ້າກັບການສອນພາຍໃນຄະນະໃນພາບລວມ, ອັນເນື່ອງມາຈາກ ຄູ-ອາຈານ ຈໍານວນໜຶ່ງກໍ່ຍັງບໍ່ທັນມີຄວາມສາມາດດ້ານຄອມພິວເຕີໃນລະດັບທີ່ດີ ແລະ ຈໍານວນທີ່ນໍາໃຊ້ໄດ້ຜົນນັ້ນ ກໍ່ຍັງດໍາເນີນການແບບເອກະເທດ ຍັງບໍ່ທັນບູລະນາການເຂົ້າເປັນລະບົບອັນດຽວກັນ ເພື່ອການມີປະສິດທິພາບທີ່ດີກ່ວາ ເຮັດໃຫ້ການຈັດຕັ້ງປະຕິບັດການສິດສອນແບບອອນລາຍ ຍັງບໍ່ທັນເປັນຂະບວນທີ່ແນ່ນອນ

ແຕ່ເຖິງຢ່າງໃດກໍ່ຕາມ ຄືດັ່ງທີ່ພວກເຮົາຮັບຮູ້ນໍາກັນເຖິງສະພາບການຂອງໂລກໃນປັດຈຸບັນທີ່ພວມເກີດມີການລະບາດຂອງເຊື້ອຈຸລະໂລກອັກເສບປອດສາຍພັນໃໝ່ COVID-19 ໄດ້ສົ່ງຜົນກະທົບຕໍ່ກັບຫຼາຍປະເທດ ລວມທັງປະເທດລາວຂອງພວກເຮົານໍາອີກ, ພາຍໃຕ້ມາດຕະການຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດດ້ວຍການເວັ້ນໄລຍະຫ່າງທາງສັງຄົມ ຫຼື Social Distancing ນັ້ນ, ກໍ່ໃຫ້ເກີດມີກະແສການເຮັດວຽກທີ່ເປັນພຶມນິຍົມໃໝ່ເກີດຂຶ້ນ ນັ້ນກໍ່ຄື Work from Home, ບັນດາຮູບແບບ ແລະ ປາກົດການຕ່າງໆທີ່ເກີດຂຶ້ນໃນບໍ່ພໍເທົ່າໃດມື້ຜ່ານມານີ້ ຄະນະສຶກສາສາດຂອງພວກເຮົາ ກໍ່ເປັນໜຶ່ງໃນຫຼາຍໆສະຖາບັນການສຶກສາ ທີ່ໄດ້ພະຍາມຍາມ Disrupt ຕົນເອງ ຄູ-ອາຈານໄດ້ພາກັນຫັນມາດໍາເນີນຈັດທໍາກິດຈະກໍາການຮຽນ-ການສອນ ສໍາລັບການສອນທາງໄກ ແກ່ນັກສຶກສາຂອງຕົນທີ່ໄດ້ພັກຢູ່ບ້ານຕາມມາດຕະການຄວບຄຸມໂລກລະບາດຂອງລັດຖະບານ. ເຊິ່ງນັບວ່າເປັນຄັ້ງທໍາອິດທີ່ພວກເຮົາໄດ້ມີການຈັດການຮຽນການສອນທາງໄກສໍາລັບນັກສຶກສາຢ່າງເປັນຈິງເປັນຈັງ ໃນຄະນະສຶກສາສາດຂອງພວກເຮົາ ຫຼື ອາດຈະທົ່ວຄະນະອື່ນໆໃນມະຫາວິທະຍາໄລສຸພານຸວົງ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຮຽນ-ການສອນທາງໄກຂອງຄູອາຈານ ສາມາດບູລະນາການເຂົ້າມາເປັນລະບົບທີ່ມີປະສິດທິພາບນັ້ນ, ການສຶກສາຂໍ້ມູນເຊິງເລິກ ແລະ ລາຍລະອຽດທາງດ້ານເຕັກນິກຕ່າງໆ ຈຶ່ງເປັນສິ່ງຈໍາເປັນທີ່ສຸດໃນການສ້າງອີງຄວາມຮູ້ດ້ານນີ້ຂອງພວກເຮົາ ທາງຄະນະຄົ້ນຄ້ວາຂອງພວກເຮົາຈຶ່ງມີຄວາມສົນໃຈດໍາເນີນການສຶກສາປະສິດທິພາບຂອງການຈັດການສອນທາງໄກຂອງຄູ-ອາຈານ ໃນຄະນະສຶກສາສາດທີ່ຜ່ານມາ ວ່າມີປະສິດທິພາບໜ້ອຍຫຼາຍໃນທາງປະຕິບັດ ເພື່ອທີ່ຈະເປັນຂໍ້ມູນສໍາລັບການພັດທະນາປັບປຸງຄຸນະພາບການສອນໃນຂັ້ນຕໍ່ໄປ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ໃກ້ຄຽງກັບພາກພື້ນແລະ ສາກົນໃນອະນາຄົດ.

ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ ແມ່ນເພື່ອສຶກສາທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການຮຽນຜ່ານລະບົບອອນລາຍ ໃນໄລຍະການລະບາດຂອງພະຍາດ COVID-19 ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

## 1. ອຸປະກອນ ແລະ ວິທີການ

### 1.1 ປະຊາກອນ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນນັກສຶກສາຄະນະສຶກສາສາດ ທີ່ກຳລັງສຶກສາໃນລະຫວ່າງສົກສຶກສາ 2019-2020 ຈຳນວນທັງໝົດ 283 ຄົນ

### 1.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ໄດ້ມາຈາກການສຸ່ມຈາກຈຳນວນນັກສຶກສາທັງໝົດ ໂດຍໃຊ້ວິທີສຸ່ມກຸ່ມຕົວຢ່າງຂອງ Taro Yamane ເຊິ່ງຈາກຈຳນວນນັກສຶກສາທັງໝົດ 283 ຄົນ, ພວກເຮົາສາມາດສຸ່ມໄດ້ກຸ່ມຕົວຢ່າງທັງໝົດ 165 ຄົນ; ໂດຍຈານວນກຸ່ມຕົວຢ່າງນີ້ແມ່ນຄອບຄຸມເອົານັກສຶກສາຈາກທຸກສາຂາວິຊາ ທັງໝົດ 6 ສາຂາ (ສຳນັກງານສະຖິຕິແຫ່ງຊາດ, 2014)

### 1.3 ເຄື່ອງມືໃນການຄົ້ນຄວ້າ

ໃນການສຶກສາປະກອບມີ ແບບປະເມີນທັດສະນະຄະຕິ ທີ່ເປັນຊຸດຄຳຖາມແບບ Rating Scale (ປະສາດ ເນືອງສະເຫຼີມ, 2013)ຈຳນວນ 25 ຂໍ້ ເຊິ່ງມີ IOC = 1.00; ແລະ ຄ່າຄວາມເຊື່ອໝັ້ນທັງສະບັບ .964

### 1.4 ວິທີການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນແມ່ນໄດ້ດຳເນີນ ໂດຍການ ແຈກຢາຍແບບສອບຖາມໃຫ້ກັບນັກສຶກສາ ພາຍຫຼັງທີ່ສຳເລັດການຮຽນອອນລາຍຢູ່ບ້ານ ແລະ ເດີນທາງກັບຄືນມາສູ່ມະຫາວິທະຍາໄລ ຫຼັງຈາກສິ້ນສຸດມາດຕະການລັອກດາວ

ການວິເຄາະຂໍ້ມູນແມ່ນໄດ້ດຳເນີນການດັ່ງຕໍ່ໄປນີ້:

❶ ວິເຄາະຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຂອງຂໍ້ມູນໃນແບບສອບຖາມ ເພື່ອຊອກຫາລະດັບ ຄຳຄິດເຫັນທີ່ເປັນທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຮຽນຜ່ານລະບົບອອນລາຍ ໃນໄລຍະການແຜ່ລະບາດຂອງເຊື້ອຈຸລາໂລກ COVID-19

❷ ປຽບທຽບຄ່າສະເລ່ຍ ຂອງ 2 ກຸ່ມຕົວຢ່າງທີ່ເປັນອິດສະຫຼະຕໍ່ກັນ (Independent-Samples t-test) ເພື່ອວິເຄາະຫາລະດັບຄວາມແຕກຕ່າງ ຂອງຄ່າສະເລ່ຍ ທາງດ້ານທັດສະນະຄະຕິ ລະຫວ່າງນັກສຶກສາທີ່ມີພູມລຳເນົາອາໄສຢູ່ທີ່ແຕກຕ່າງກັນ

## 2. ຜົນໄດ້ຮັບ

ຈາກການວິເຄາະຂໍ້ມູນແບບສອບຖາມຂອງນັກສຶກສາ ສາມາດວິເຄາະຜົນໄດ້ດັ່ງນີ້:

❶ ທັດສະນະຄະຕິຂອງນັກສຶກສາ ຕໍ່ກັບການຈັດການຮຽນ-ການສອນ ໂດຍຜ່ານລະບົບອອນລາຍ ແມ່ນຢູ່ໃນລະດັບປານກາງ $\bar{X}$= 3.36; S.D = 0.80 ໂດຍສາມາດແບ່ງອອກເປັນ 4 ດ້ານດັ່ງນີ້:

- ດ້ານຄວາມສາມາດນຳໃຊ້ເຄື່ອງມືຂອງຄູສອນ ແມ່ນມີທັດສະນະຄະຕິເຫັນດີໃນລະດັບ ປານກາງ $\bar{X}$= 3.46; S.D = 0.71
- ດ້ານການຈັດກິດຈະກຳການສອນຂອງຄູ ແມ່ນມີທັດສະນະຄະຕິເຫັນດີໃນລະດັບຫຼາຍ $\bar{X}$= 3.68; S.D = 0.76
- ດ້ານການບັນຍາຍອອນລາຍຂອງຄູ ແມ່ນມີທັດສະນະຄະຕິເຫັນດີໃນລະດັບຫຼາຍ $\bar{X}$= 3.76; S.D = 0.77
- ດ້ານການວັດ-ປະເມີນຜົນ ແມ່ນມີທັດສະນະຄະຕິເຫັນດີໃນລະດັບປານກາງ $\bar{X}$= 2.54; S.D = 0.95

❷ ນັກສຶກສາທີ່ມາຈາກພູມລຳເນົາຕ່າງກັນ ມີທັດສະນະຄະຕິທີ່ແຕກຕ່າງກັນ ໃນລະດັບ .05

## 3. ວິພາກຜົນ

ໃນການຄົ້ນຄວ້າຄັ້ງນີ້ ພົບວ່າ ນັກສຶກສາຍັງບໍ່ຄ່ອຍເຫັນດີກັບການຈັດການຮຽນ-ການສອນຜ່ານລະບົບອອນລາຍເທົ່າທີ່ຄວນ ສະແດງອອກໃນຄ່າສະເລ່ຍລວມ ທີ່ມີພຽງ $\bar{X}$= 3.36; $S.D$ = 0.80 ເທົ່ານັ້ນ; ສາເຫດທີ່ຜົນອອກມາແບບນີ້ ກໍ່ເພາະວ່າ ການຮຽນ-ການສອນໂດຍຜ່ານລະບົບອອນລາຍນັ້ນ ຍັງເປັນສິ່ງໃໝ່ສຳລັບນັກສຶກສາທີ່ສ່ວນໃຫຍ່ຍັງຂາດຄວາມຮູ້ດ້ານ ICT ແລະ ບໍ່ຄວາມຄຸ້ນເຄີຍກັບການຮຽນຜ່ານລະບົບອອນລາຍ ເຊິ່ງສອດຄ່ອງກັບຂໍ້ມູນສະຖິຕິຂອງຄະນະສຶກສາສາດ ທີ່ໄດ້ລະບຸໃນບົດສະຫຼຸບປະຈຳສົກຮຽນວ່າ "ນັກສຶກສາຈຳນວນສ່ວນຫຼາຍ ແມ່ນມາຈາກຊົນນະບົດເຂດຫ່າງໄກສອກຫຼີກ ເຊິ່ງໃນນັ້ນມີຈຳນວນບໍ່ໜ້ອຍທີ່ມາຈາກພື້ນຖານເສດຖະກິດຄອບຄົວທີ່ຂາດເຂີນ

(ຄະນະສຶກສາສາດ, 2020); ເຊິ່ງເປັນປັດໄຈໜຶ່ງໃນການເຮັດໃຫ້ນັກສຶກສາເຫຼົ່ານີ້ ບໍ່ມີໂອກາດເຂົ້າເຖິງອຸປະກອນອີເລັກໂທຣນິກ ທີ່ມີລາຄາແພງ ແລະ ບໍ່ມີພື້ນຖານຄວາມຮູ້ທາງຄອມພິວເຕີທີ່ດີ ເຮັດໃຫ້ການຫັນປ່ຽນມາຮຽນຜ່ານລະບົບອອນລາຍນັ້ນ ແມ່ນຍັງພົບຄວາມຫຍຸ້ງຍາກ ອີກດ້ານໜຶ່ງຂອງຄວາມເປັນຈິງຄື ການຫັນປ່ຽນຈາກການສອນໃນຫ້ອງຮຽນ ມາເປັນການສອນຜ່ານລະບົບອອນລາຍນັ້ນແມ່ນໄດ້ດຳເນີນໄປພາຍໃນເວລາອັນສັ້ນ ແລະ ຮີບດ່ວນເນື່ອງດ້ວຍຄວາມຈຳເປັນພາວະວິໄສ ຍ້ອນການແຜ່ລະບາດຂອງເຊື້ອຈຸລະໂລກ COVID-19 ແມ່ນໄດ້ແຜ່ລາມເປັນວົງກວ້າງ ເຮັດໃຫ້ຮູບແບບການຮຽນການສອນແບບເກົ່າ ທີ່ຕ້ອງລວມກຸ່ມກັນຫຼາຍຄົນໃນຫ້ອງຮຽນ ບໍ່ສອດຄ່ອງກັບມາດຕະການຄວບຄຸມການແຜ່ລະບາດ. ເມື່ອຕ້ອງຫັນມາຮຽນຜ່ານລະບົບອອນລາຍ ເຮັດໃຫ້ນັກສຶກສາຫຼາຍຄົນແມ່ນບໍ່ມີເວລາປັບຕົວ ແລະ ກະກຽມ ໂດຍສະເພາະການກະກຽມທາງດ້ານອຸປະກອນອີເລັກໂທຣນິກ ແລະ ທັກສະການຮຽນໃນລະບົບອອນລາຍ, ເວົ້າໄດ້ວ່າ ທຸກຢ່າງເປັນສິ່ງໃໝ່ບໍ່ສະເພາະກັບນັກສຶກສາເທົ່ານັ້ນ ສຳລັບຄູອາຈານກໍ່ເຊັ່ນດຽວກັນ ການຫັນມາສອນຜ່ານລະບົບອອນລາຍແບບກະທັນຫັນ ໄດ້ສ້າງຄວາມຫຍຸ້ງຍາກບໍ່ໜ້ອຍໃຫ້ກັບຄູ-ອາຈານ ໃນການກະກຽມ, ດັດແປງບົດສອນຂອງຕົນເອງເພື່ອໃຫ້ແທດເໝາະກັບຮູບແບບການຮຽນ-ການສອນແບບໃໝ່.

ນອກຈາກນີ້ ການຄົ້ນຄວ້າຍັງພົບວ່າ ນັກສຶກສາທີ່ມາຈາກພູມລຳເນົາແຕກຕ່າງກັນແມ່ນຈະມີທັດສະນະຄະຕິແຕກຕ່າງກັນຢ່າງມີ ຕໍ່ກັບການຮຽນຜ່ານລະບົບອອນລາຍ ສາເຫດທີ່ເປັນເຊັ່ນນີ້ ກໍ່ເພາະວ່າ ນັກສຶກສາທີ່ເປັນກຸ່ມຕົວຢ່າງຂອງພວກເຮົາແມ່ນ ມາຈາກພູມລຳເນົາແຕກຕ່າງກັນ ໂດຍສະເພາະນັກສຶກສາທີ່ມາຈາກຕົວເມືອງ ແລະ ນັກສຶກສາທີ່ມາຈາກເຂດຫ່າງໄກສອກຫຼີກ; ສອງກຸ່ມຕົວຢ່າງນີ້ ມີທັດສະນະແຕກຕ່າງກັນຢ່າງຊັດເຈນຕໍ່ກັບການຮຽນຜ່ານລະບົບອອນລາຍ ເຊິ່ງຈາກຂໍ້ມູນຕົວຈິງພົບວ່າ ນັກສຶກສາທີ່ມາຈາກຕົວເມືອງນັ້ນ ຈະພົບບັນຫາໜ້ອຍກວ່ານັກສຶກສາເຂດຫ່າງໄກ ໃນຂັ້ນຕອນ ແລະ ຂະບວນການຮຽນ ໃນໄລຍະການແຜ່ລະບາດຂອງພະຍາດ COVID-19 ແລະ ທັງມີແນວໂນ້ມຍອມຮັບເອົາການຮຽນແບບໃໝ່ນີ້ງ່າຍດາຍກວ່ານັກສຶກສາອີກກຸ່ມ ອັນເຮັດໃຫ້ທັດສະນະຄະຕິຂອງເຂົາເຈົ້າຕໍ່ກັບເລື່ອງນີ້ ມີຄວາມແຕກຕ່າງກັນ. (ສຸຣາງ ໂຄດຕະພູນ, 2009)

ເຖິງຢ່າງໃດກໍ່ຕາມ ການຄົ້ນຄວ້າຄັ້ງນີ້ແມ່ນໄດ້ດຳເນີນກັບກຸ່ມຕົວຢ່າງພາຍໃນຄະນະສຶກສາສາດເທົ່ານັ້ນ ເຊິ່ງເປັນຄະນະທີ່ມີຈຸດພິເສດຂອງນັກສຶກສາແຕກຕ່າງກັບນັກສຶກສາຂອງຄະນະອື່ນໆພາຍໃນມະຫາວິທະຍາໄລສຸພານຸວົງ ທີ່ມີໂຄງສ້າງຂອງນັກສຶກສາໃນອີກຮູບແບບໜຶ່ງ ບາງຄະນະກໍ່ໄດ້ມີການທົດລອງໃຊ້ຮູບແບບການຮຽນ-ການສອນ ແບບອອນລາຍເຊັ່ນດຽວກັນ ແລະ ມີຜົນໄດ້ຮັບແຕກຕ່າງອອກໄປ ໂດຍສະເພາະການຄົ້ນຄວ້າຂອງທ່ານ ວິນັດ ເມກທະນາວັນ ໄດ້ເຮັດການທົດລອງການທົດລອງທີ່ຄະນະວິສະວິກຳສາດ ທີ່ໄດ້ມີການນຳເອົາລະບົບອອນລາຍເຂົ້າມາໃຊ້ຈັດການຮຽນ-ການສອນ ຕະຫຼອດຮອດການປະເມີນຜົນການຮຽນ ເຊິ່ງຜົນການທົດລອງເຫັນ ໄດ້ຮັບການຕອບຮັບຈາກຄູ-ອາຈານ ແລະ ນັກສຶກສາເປັນຢ່າງດີ ມີຄວາມເພິ່ງພໍໃຈໃນລະດັບຫຼາຍ ແລະ ມີຄວາມພ້ອມ ຫຼື ເປັນໄປໄດ້ສູງ ໃນການສືບຕໍ່ຜັນຂະຫຍາຍວິທີການຈັດການສອບເສັງແບບອອນລາຍນີ້ເຂົ້າເປັນໜຶ່ງ ໃນວິທີການສອບເສັງໃຫ້ກັບນັກສຶກສາ (ວິນັດ ເມກທະນາວັນ ແລະ ຄະນະ, 2020)

ທັງນີ້ຈາກຂໍ້ມູນພວກເຮົາຍັງສາມາດຮູ້ເຖິງທັດສະນະຂອງນັກສຶກສາຕໍ່ກັບການສອນຂອງຄູໃນແຕ່ລະດ້ານ ໂດຍສະເພາະ ດ້ານການວັດ ແລະ ປະເມີນຜົນການຮຽນຜ່ານລະບົບອອນລາຍ ເຊິ່ງເປັນນະວັດຕະກຳອັນໜຶ່ງທີ່ສ້າງຄວາມຕື່ນຕົວໃຫ້ກັບນັກສຶກສາ ໃນຂະນະທີ່ຄ່າສະເລ່ຍໃນດ້ານນີ້ແມ່ນປະກົດພຽງລະດັບປານກາງເທົ່ານັ້ນ ມັນໄດ້ສະທ້ອນໃຫ້ເຫັນເຖິງຂໍ້ມູນເຊີງເລິກວ່າ ເຖິງມັນຈະເປັນນະວັດຕະກຳທີ່ທັນສະໄໝ ແຕ່ເມື່ອນັກສຶກສາບໍ່ສາມາດໄດ້ຄະແນນດີຈາກການປະເມີນຜ່ານລະບົບນັ້ນ ເຂົາເຈົ້າກໍ່ອາດຈະມີທັດສະນະຄະຕິໄປໃນທາງກົງກັນຂ້າມໄດ້. ສອດຄ່ອງ

ກັບງານວິໄຈຂອງ ທ່ານ ໄບດິກາ ສີທະນົນໄຊ ທີ່ໄດ້ສຶກສາ "ການພັດທະນາລະບົບທົດສອບອອນລາຍຂອງມະຫາວິທະຍາໄລຈຸລາລົງກອນຣາຊວິທະຍາໄລ" ໂດຍມີຂໍ້ວິພາກບາງຕອນວ່າ "ຮູບແບບຂອງຂໍ້ສອບທີ່ນຳມາທົດສອບນັ້ນມີຄວາມທັນສະໄໝ ແລະ ໜ້າດຶງດູດ ແຕ່ສຳລັບກຳລະນີກຸ່ມຕົວຢ່າງຈາກຈຸລາລົງກອນມະຫາວິທະຍາໄລກັບມີຄ່າສະເລ່ຍຄວາມເພິ່ງພໍໃຈທີ່ໜ້ອຍທີ່ສຸດ ເມື່ອທຽບກັບມະຫາວິທະຍາໄລອື່ນໆ" (ໄບດິກາ ສີທະນົນໄຊ ແລະ ຄະນະ, 2018)

## 4. ສະຫຼຸບຜົນ

ຜ່ານສຶກສາທັດສະນະຄະຕິຂອງນັກສຶກສາຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ຕໍ່ກັບການຮຽນຜ່ານລະບົບອອນລາຍ ໃນໄລຍະການລະບາດຂອງເຊື້ອຈຸລາໂລກ COVID-19 ສາມາດຄົ້ນພົບວ່າ ເຂົາເຈົ້າຍັງບໍ່ທັນເຂົ້າໃຈ ແລະ ຍອມຮັບຮູບແບບການສອນແບບອອນລາຍເທົ່າທີ່ຄວນ ອັນເນື່ອງມາຈາກຫຼາຍປັດໄຈ ໂດຍສະເພາະກໍ່ຄືຄວາມເຂົ້າໃຈຕໍ່ກັບການນຳໃຊ້ລະບົບອອນລາຍ ແມ່ນຍັງບໍ່ທັນດີປານໃດ ເຮັດໃຫ້ເວລາມານຳໃຊ້ຮຽນກັບຄູ-ອາຈານແມ່ນພົບຄວາມຫຍຸ້ງຍາກ ອັນເປັນທີ່ມາຂອງທັດສະນະຄະຕິຂອງເຂົາເຈົ້າຕໍ່ກັບເທັກໂນໂລຍີໃໝ່ນີ້ ແມ່ນຢູ່ໃນລະດັບປານກາງເທົ່ານັ້ນ

ນອກຈາກນີ້ ຂໍ້ມູນຈາກການຄົ້ນຄວ້າ ຍັງໃຫ້ຮູ້ອີກວ່າ ນັກສຶກສາທີ່ມາຈາກຊົນນະບົດ ແລະ ນັກສຶກສາທີ່ມາຈາກຕົວເມືອງນັ້ນ ມີທັດສະນະຄວາມຄິດທີ່ບໍ່ຄືກັນ ຕໍ່ກັບການນຳໃຊ້ເທັກໂນໂລຍີໃໝ່ນີ້ ອັນເນື່ອງມາຈາກພື້ນຖານປະສົບການການເຂົ້າເຖິງອຸປະກອນອີເລັກໂທຣນິກ ທີ່ແຕກຕ່າງກັນ

## 5. ຂໍຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 6. ເອກະສານອ້າງອີງ

ຄະນະສຶກສາສາດ. (2019). *ຄູ່ມືບໍລິຫານຄະນະສຶກສາສາດ.* ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ຄະນະສຶກສາສາດ. (2020). *ບົດສະຫຼຸບປະຈຳສົກສຶກສາ 2019-2020.* ຫຼວງພະບາງ: ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ຈັກກະພົດ ໂພດາພົມ. (2020). *ການຈັດການຮຽນຮູ້ອອນລາຍ.* ເລີຍ: ມະຫາວິທະຍາໄລມະຫາມົງກຸດຣາຊວິທະຍາໄລ.

ສຸຣາງ ໂຄດຕະກູນ. (2009). *ຈິດຕະວິທະຍາການສຶກສາ* (ພິມຄັ້ງທີ. 8). ບາງກອກ: ສຳນັກພິມຈຸລາລົງກອນມະຫາວິທະຍາໄລ.

ສຳນັກງານສະຖິຕິແຫ່ງຊາດ. (2014). ການເທັກນິກການສຸ່ມກຸ່ມຕົວຢ່າງ ແລະ ການປະມານຄ່າ. ບາງກອກ: ສຳນັກງານສະຖິຕິແຫ່ງຊາດໄທ.

ທິດສະນາ ແຂມມະນີ. (ພສ 2555). *ສາດການສອນ* (ພິມຄັ້ງທີ. 3). ບາງກອກ: ສູນໜັງສືຈຸລາ.

ບົດສະຫຼຸບປະຈຳສົກສຶກສາ 2018-2019. (2019). *ວຽກງານຄຸ້ມຄອງຫໍພັກ.* ຫຼວງພະບາງ: ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ປະສາດ ເນືອງສະເຫຼີມ. (2013). *ການວິໄຈທາງການສຶກສາ* (ພິມຄັ້ງທີ. 2). ບາງກອກ: ບໍລິສັດວີປິນ 1771 ຈຳກັດ.

ວິນັດ ເມກທະນາວັນ ແລະ ຄະນະ. (2020). ຄວາມເພິ່ງພໍໃຈຂອງຄູ-ອາຈານ ແລະ ນັກສຶກສາພາກວິຊາວິສະວະກຳຄອມພິວເຕີ ຕໍ່ກັບການຈັດການສອບເສັງຜ່ານລະບົບອອນລາຍ. *Souphanouvong Journal, 06*(2), 186 - 197.

ໄບດິກາ ສີທະນົນໄຊ ແລະ ຄະນະ. (2018). *ການພັດທະນາລະບົບທົດສອບອອນລາຍເພື່ອການສຶກ*

*ສາຂອງມະຫາວິທະຍາໄລຈຸລາລົງກອນ.* ບາງກອກ: ມະຫາວິທະຍາໄລຈຸລາລົງກອນ.

Admin. (n.d.). *ການຮຽນ-ການສອນແບບອອນລາຍ.* Retrieved from www.educatorroundtable.org: https://www.educatorroundtable.org/%E0%B8%81%E0%B8%B2%E0%B8%A3%E0%B9%80%E0%B8%A3%E0%B8%B5%E0%B8%A2%E0%B8%99%E0%B8%81%E0%B8%B2%E0%B8%A3%E0%B8%AA%E0%B8%AD%E0%B8%99%E0%B9%81%E0%B8%9A%E0%B8%9A%E0%B8%AD%E0%B8%AD%E0%B8%99%E0%B9%84%E0%B8%A5/

internetworldstats. (2020). *Internet User Intribution in the world*. Retrieved from https://www.internetworldstats.com/stats.htm

Ministry of Education and Sport. (2016). Strategy 2015 and Vision 2030 . Vientiane: Ministry of Education and Sport.

Ronghuai Huang and J. Michael Spector. (2019). *Educational Technology.* Denton, TX, USA: University of North Texas.

**ຕາຕະລາງ 1**: ສະແດງຂໍ້ມູນນັກສຶກສາ

| Original | | | | | |
|---|---|---|---|---|---|
| | | **Frequency** | **Percent** | **Valid Percent** | **Cumulative Percent** |
| **Valid** | Urban | 61 | 37.0 | 37.0 | 37.0 |
| | Rural | 104 | 63.0 | 63.0 | 100.0 |
| | Total | 165 | 100.0 | 100.0 | |

**ຕາຕະລາງ 2:** ສະແດງຂໍ້ມູນທັດສະນະຄະຕິນັກສຶກສາຕໍ່ກັບປະສິດທິພາບການນໍາໃຊ້ເຄື່ອງມືຂອງຄູ

| Report | | | | | | |
|---|---|---|---|---|---|---|
| | Q 1 | Q 2 | Q 3 | Q 4 | Q 5 | Total |
| Mean | 3.39 | 3.44 | 3.53 | 3.44 | 3.48 | 3.46 |
| Std.Deviation | 0.71 | 0.66 | 0.72 | 0.70 | 0.74 | 0.71 |

**ຕາຕະລາງ 3**: ສະແດງຂໍ້ມູນທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດກິດຈະກາການສອນຂອງຄູ

| Report | | | | | | |
|---|---|---|---|---|---|---|
| | Q 6 | Q 7 | Q 8 | Q 9 | Q 10 | Total |
| Mean | 3.64 | 3.64 | 3.73 | 3.56 | 3.84 | 3.68 |
| Std.Deviation | 0.68 | 0.76 | 0.80 | 0.84 | 0.84 | 0.76 |

**ຕາຕະລາງ 4**: ສະແດງຂໍ້ມູນທັດສະນະຄະຕິຂອງນັກສຶກສາຕໍ່ກັບການບັນຍາຍອອນລາຍຂອງຄູ

| Report | | | | | | |
|---|---|---|---|---|---|---|
| | Q 11 | Q 12 | Q 13 | Q 14 | Q 15 | Total |
| Mean | 3.73 | 3.73 | 3.83 | 3.72 | 3.78 | 3.76 |
| Std.Deviation | 0.78 | 0.75 | 0.68 | 0.86 | 0.79 | 0.77 |

**ຕາຕະລາງ 5:** ສະແດງຂໍ້ມູນທັດສະນະຄະຕິຂອງນັກສຶກສາຕໍ່ກັບການປະເມີນຜົນຜ່ານລະບົບອອນລາຍຂອງຄູ

| Report | | | | | | |
|---|---|---|---|---|---|---|
| | Q 16 | Q 17 | Q 18 | Q 19 | Q 20 | Total |
| Mean | 2.92 | 2.35 | 2.67 | 2.24 | 2.53 | 2.54 |
| Std.Deviation | 0.79 | 0.99 | 1.04 | 0.90 | 1.03 | 0.99 |

**ຕາຕະລາງ 6:** ສະແດງຂໍ້ມູນລວມທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນແບບອອນລາຍ

| N0 | Opinion toward online Instruction | Mean | S.D | Leval |
|---|---|---|---|---|
| 1 | Teacher’s Abilities | 3.46 | 0.71 | Median |
| 2 | Activity management | 3.68 | 0.76 | High |
| 3 | Lecture | 3.76 | 0.77 | High |
| 4 | Assessment | 3.54 | 0.95 | Median |
| | Total | 3.36 | 0.80 | Median |

**ຕາຕະລາງ 7:** ສະແດງຜົນການວິເຄາະຄວາມແຕກຕ່າງຂອງທັດສະນະຄະຕິນັກສຶກສາທີ່ຕ່າງພູມລຳເນົາ

| Independent Samples Test | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | Levene's Test for Equality of Variances | | t-test for Equality of Means | | | | | | |
| | | F | Sig. | t | df | Sig. (2-tailed) | Mean Difference | Std. Error Difference | 95% Confidence Interval of the Difference | |
| | | | | | | | | | Lower | Upper |
| Q 110 | Equal variances assumed | 4.083 | .045 | 2.135 | 161 | .034 | .418 | .196 | .031 | .804 |
| | Equal variances not assumed | | | 2.072 | 124.667 | .040 | .418 | .202 | .019 | .816 |
| Q 210 | Equal variances assumed | 5.102 | .025 | -.528 | 154 | .599 | -.093 | .176 | -.442 | .255 |
| | Equal variances not assumed | | | -.551 | 153.896 | .583 | -.093 | .169 | -.427 | .241 |